**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

===========

ກະຊວງສຶກສາທິການ ແລະ ກິລາ

ເລກທີ 748 /ສສກ.ກສ

ນະຄອນຫຼວງວຽງຈັນ, ວັນທີ 23/05/2018

# ຂໍ້ກຳນົດ

## ວ່າດ້ວຍການຈັດຕັ້ງງານມະຫາກຳກິລາແຫ່ງຊາດ

- ອີງຕາມ ດຳລັດນາຍົກລັດຖະມົນຕີ, ສະບັບເລກທີ 282/ນຍ, ລົງວັນທີ 7/9/2011 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງ ກະຊວງສຶກສາທິການ ແລະ ກິລາ
- ອີງຕາມ ກົດໝາຍວ່າດ້ວຍ ກິລາ-ກາຍະກຳ ສະບັບປັບປຸງ ເລກທີ 15/ສພຊ, ລົງວັນທີ 6/7/2012.
- ອີງຕາມ ມະຕິຂອງກອງປະຊຸມ ຜູ້ນຳກິລາທົ່ວປະເທດ ທີ່ນະຄອນຫຼວງວຽງຈັນ, ລົງວັນທີ 14-15/2/2013.

ເພື່ອເຮັດໃຫ້ລະບົບການຈັດຕັ້ງ ແລະ ຄຸ້ມຄອງງານມະຫາກຳກິລາແຫ່ງຊາດ ດຳເນີນໄປຢ່າງຖືກຕ້ອງຕາມລະບຽບຫຼັກການ.

## ລັດຖະມົນຕີວ່າການ ກະຊວງສຶກສາທິການ ແລະ ກິລາ ອອກຂໍ້ກຳນົດ ດັ່ງນີ້:

## ພາກທີ I

## ວ່າດ້ວຍລະບຽບການທົ່ວໄປ

**ມາດຕາ 1:** ງານມະຫາກຳກິລາແຫ່ງຊາດ ແມ່ນງານບຸນມະໂຫລານດ້ານການກິລາລະດັບຊາດ ທີ່ ປະກອບດ້ວຍການແຂ່ງຂັນກິລາປະເພດຕ່າງໆລະຫວ່າງບັນດາແຂວງ, ນະຄອນຫຼວງ ແລະ ບັນດາກະຊວງ ເພື່ອສະແດງອອກເຖິງອາຣິຍະທຳມູນເຊື້ອອັນດີງາມຂອງປະຊາຊົນລາວບັນດາເຜົ່າ ເປັນການສົ່ງເສີມ ແລະ ພັດທະນາວຽກງານກິລາຂອງຊາດໃຫ້ນັບມື້ນັບເຂັ້ມແຂງ, ຮັບປະກັນຈຸດປະສົງ ແລະ ລະດັບຄາດໝາຍ ດັ່ງນີ້:

1.1 ເປັນການເສີມຂະຫຍາຍວຽກງານກິລາ- ກາຍະກຳ ເຂົ້າສູ່ມວນຊົນບັນດາເຜົ່າ ຫັນໄປສູ່ການຫຼິ້ນກິລາຢ່າງກວ້າງຂວາງ ແລະ ຕໍ່ເນື່ອງ ເພື່ອຍົກສູງລະດັບສະມັດຕະພາບຮ່າງກາຍ ແລະ ມານະຈິດໃນການຮັບໃຊ້ວຽກງານການພັດທະນາເສດຖະກິດ-ສັງຄົມ, ການປົກປັກຮັກສາ ແລະ ກໍ່ສ້າງປະເທດຊາດ.



Printed by BoltPDF (c) NCH Software. Free for non-commercial use only.

1.2 ເປັນການເຄື່ອນໄຫວດ້ານວັດທະນະທຳ-ສັງຄົມ, ສ້າງນ້ຳໃຈສາມັກຄີ, ລະບຽບວິໄນຂອງຊາວໜຸ່ມ, ນັກສຶກສາ, ປັນຍາຊົນ ແລະ ປວງຊົນລາວບັນດາເຜົ່າ ອັນຈະເປັນການປະກອບສ່ວນສຳຄັນໃນການພັດທະນາຊັບ ພະຍາກອນມະນຸດ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ບາງປະການຂອງສັງຄົມ.

1.3 ເປັນການຍົກລະດັບທາງດ້ານເຕັກນິກ ຍຸດທະວິທີ ໃນການຫຼິ້ນກິລາປະເພດຕ່າງໆໃຫ້ກ້າວຂຶ້ນສູ່ລະດັບສູງເປັນກ້າວໆ ແລະ ທຽມທັນກັບສາກົນ.

1.4 ເປັນການຮັດແໜ້ນຄວາມສາມັກຄີພາຍໃນ ລະຫວ່າງ ສູນກາງ, ທ້ອງຖິ່ນ, ຂະແໜງການຕ່າງໆ ໃຫ້ນັບມື້ນັບກວ້າງຂວາງ ແລະ ເລິກເຊິ່ງ.

1.5 ເປັນການພັດທະນາ ແລະ ຍົກລະດັບຢ່າງຮອບດ້ານ ໃນການກະກຽມເປັນເຈົ້າພາບຈັດງານແຂ່ງຂັນນາໆຊາດ ແລະ ເຂົ້າຮ່ວມແຂ່ງຂັນໃນລະດັບພາກພື້ນ ແລະ ສາກົນ.

**ມາດຕາ 2: ລະບຽບການຈັດງານມະຫາກຳກິລາແຫ່ງຊາດ.**

2.1 ການແຂ່ງຂັນກິລາແຫ່ງຊາດຈັດຂຶ້ນທຸກໆ 3 ປີ ໂດຍແຕ່ລະແຂວງ ສະໝັກຜັດປ່ຽນກັນເປັນເຈົ້າພາບ ແລະ ມີກາເຄື່ອງໝາຍສະເພາະ ພາຍໃຕ້ການອະນຸມັດຈາກລັດຖະບານ ສ ປ ປ ລາວ. ວາລະ ແລະ ລາຍການແຂ່ງຂັນແມ່ນໃຫ້ສອດຄ່ອງກັບລະບຽບລາຍການແຂ່ງຂັນກິລາພື້ນເມືອງລາວ ແລະ ກິລາສາກົນທີ່ ກະຊວງສຶກສາທິການ ແລະ ກິລາ ແລະ ຄະນະກຳມະການກິລາໂອແລມປິກລາວ ໄດ້ເຂົ້າເປັນສະມາຊິກ ເຊັ່ນ: ຊີເກມ, ເອຊຽນເກມ ແລະ ໂອແລມປິກເກມ.

2.2 ຄະນະຮັບຜິດຊອບຈັດງານມະຫາກຳກິລາແຫ່ງຊາດແຕ່ລະຄັ້ງ ແມ່ນການສະເໜີ ຂອງ ກະຊວງສຶກສາທິການ ແລະ ກິລາ ສົມທົບກັບແຂວງເຈົ້າພາບ ເພື່ອຂໍອະນຸມັດການຕົກລົງແຕ່ງຕັ້ງຈາກທ່ານ ນາຍົກລັດຖະມົນຕີ.

2.3 ແຂວງເຈົ້າພາບ ແມ່ນໃຫ້ກະກຽມເງື່ອນໄຂການຮັບຕ້ອນ, ພາຫານະຂົນສົ່ງ, ທີ່ພັກ, ການບໍລິການ, ສະຖານທີ່ຝຶກແອບ ແລະ ແຂ່ງຂັນ ຕະຫຼອດຮອດນັກວິຊາການໃຫ້ຖືກຕ້ອງຕາມລະບຽບການ ແລະ ມາດຕະຖານອັນຈຳເປັນ ທັງຮັບປະກັນຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພ ໃນງານກິລາແຫ່ງຊາດ.

2.4 ຄະນະຮັບຜິດຊອບ ແລະ ນັກກິລາຈາກ ບັນດາກະຊວງ ບັນດາແຂວງ ແລະ ນະຄອນຫຼວງ ແມ່ນກຸ້ມຕົນເອງຢ່າງຮອບດ້ານໃນການໃຊ້ຈ່າຍງົບປະມານເພື່ອເຂົ້າຮ່ວມງານກິລາແຫ່ງຊາດສຳລັບຄະນະຂອງຕົນ. ສ່ວນແຂວງທີ່ເປັນເຈົ້າພາບ ນອກຈາກກຸ້ມຕົນເອງແລ້ວລາຍຮັບຈາກການຈັດງານ ແມ່ນຈະໄດ້ນຳມາໃຊ້ຈ່າຍເຂົ້າໃນງານແຂ່ງຂັນກິລາແຫ່ງຊາດ.

2.5 ສຳລັບນັກກິລາແຕ່ລະປະເພດຂອງ ບັນດາກະຊວງ, ບັນດາແຂວງ ແລະ ນະຄອນຫຼວງ ນັບທັງເຈົ້າພາບແມ່ນຕ້ອງຂຶ້ນທະບຽນຢ່າງຖືກຕ້ອງຕາມລະບຽບຫຼັກການ ຂອງ ກະຊວງສຶກສາທິການ ແລະ ກິລາວາງອອກ.

2.6 ການແຂ່ງຂັນກິລາແຕ່ລະປະເພດຢູ່ໃນງານມະຫາກຳກິລາແຫ່ງຊາດ ຄະນະກິລາບັນດາກະຊວງ, ບັນດາແຂວງ ແລະ ນະຄອນຫຼວງ ທີ່ ສະໝັກເຂົ້າຮ່ວມແຂ່ງຂັນຕ້ອງສົ່ງຄະນະນັກກິລາເຂົ້າຮ່ວມຕາມຄວາມອາດສາມາດຂອງຕົນແຕ່ບໍ່ໃຫ້ຫຼຸດ 4 ປະເພດກິລາ.



Printed by BoltPDF (c) NCH Software. Free for non-commercial use only.

2.7 ການກໍານົດປະເພດກິລາໃນງານແຂ່ງຂັນກິລາແຫ່ງຊາດ, ແຕ່ລະປະເພດແມ່ນກອງປະຊຸມຂອງຄະນະຮັບຜິດຊອບຈັດງານມະຫາກໍາກິລາແຫ່ງຊາດ ແລະ ແຂວງເຈົ້າພາບ ເປັນຜູ້ຕົກລົງເປັນເອກະພາບ, ຢ່າງໜ້ອຍບໍ່ໃຫ້ຫຼຸດ 20 ປະເພດກິລາ ຫຼື ບໍ່ຫຼຸດງານກິລາແຫ່ງຊາດຄັ້ງທີ່ຜ່ານມາ (ຖ້າບໍ່ຈໍາເປັນ).

- **ກິລາພາກບັງຄັບ:** ກໍານົດເອົາກິລາ ແລ່ນ-ລານ
- **ກິລາພື້ນເມືອງ** : ສາມາດບັນຈຸເຂົ້າໃນບາງປະເພດກິລາທີ່ມີກົດລະບຽບ, ກະຕິກາການແຂ່ງຂັນທີ່ເປັນເກມກິລາອັນແນ່ນອນ ແລະ ແຜ່ຫຼາຍໃນສັງຄົມ
- **ກິລາສາກົນ** ແມ່ນປະເພດກິລາທີ່ມີການແຂ່ງຂັນໃນ ຊີເກມ, ເອຊຽນເກມ ແລະ ໂອແລັມປິກເກມ.

2.8 ຄະນະຮັບຜິດຊອບຈັດງານມະຫາກໍາກິລາແຫ່ງຊາດ ແຈ້ງການໃຫ້ບັນດາກະຊວງ, ບັນດາແຂວງ ແລະ ນະຄອນຫຼວງ ຮັບຊາບກ່ຽວກັບປະເພດກິລາກ່ອນເປີດງານແຂ່ງຂັນກິລາແຫ່ງຊາດ ຢ່າງໜ້ອຍ 09 ເດືອນ

2.9 ສໍາລັບກະຕິກາ ແມ່ນໃຫ້ປະຕິບັດຕາມກະຕິກາສາກົນຂອງປະເພດກິລານັ້ນໆ ແລະ ລະບຽບການ ຂອງກະຊວງສຶກສາທິການ ແລະ ກິລາ ແລະ ສະຫະພັນກິລາແຫ່ງຊາດ ວາງອອກ.

## ພາກທີ II

## ວ່າດ້ວຍລະບົບກົງຈັກການຈັດຕັ້ງ ຊີ້ນໍາ ຄຸ້ມຄອງ ການຈັດງານມະຫາກໍາກິລາແຫ່ງຊາດ

**ມາດຕາ 3: ລະບົບການຈັດຕັ້ງ ຊີ້ນໍາ, ຄຸ້ມຄອງ ການຈັດງານມະຫາກໍາກິລາແຫ່ງຊາດ**

3.1 ຄະນະຮັບຜິດຊອບຈັດງານມະຫາກໍາກິລາແຫ່ງຊາດ ແມ່ນການຕົກລົງແຕ່ງຕັ້ງໂດຍ ທ່ານນາຍົກລັດຖະມົນຕີ ປະກອບດ້ວຍ: ແຂວງເຈົ້າພາບ, ກະຊວງສຶກສາທິການ ແລະ ກິລາ ແລະ ກະຊວງ ທີ່ກ່ຽວຂ້ອງ.

3.2 ບັນດາກໍາມະການຝ່າຍຕ່າງໆ ແມ່ນ ແຕ່ງຕັ້ງໂດຍປະທານຄະນະຮັບຜິດຊອບຈັດງານມະຫາກໍາກິລາແຫ່ງຊາດ ປະກອບດ້ວຍ ການນໍາຂອງກະຊວງ ສຶກສາທິການ ແລະ ກິລາ, ຄະນະກໍາມະການໂອແລັມປິກແຫ່ງຊາດ, ສະຫະພັນກິລາແຫ່ງຊາດ ແຂວງເຈົ້າພາບ ແລະ ວິຊາການຂອງບັນດາກະຊວງທີ່ກ່ຽວຂ້ອງ ດັ່ງລາຍລະອຽດລຸ່ມນີ້:

3.2.1 ກອງເລຂາ.

3.2.2 ກໍາມະການ ເຕັກນິກ-ຈັດການແຂ່ງຂັນ.

3.2.3 ກໍາມະການ ພິທີການ ແລະ ຕ້ອນຮັບ.

3.2.4 ກໍາມະການ ພິທີເປີດ-ປິດ,

3.2.5 ກໍາມະການ ໂຄສະນາ-ຂ່າວສານ

3.2.6 ກໍາມະການ ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ.

3.2.7 ກໍາມະການ ເສດຖະກິດ ແລະ ລະດົມທຶນ.

3.2.8 ກໍາມະການ ຂົນສົ່ງ.

3.2.9 ກໍາມະການ ສະຖານທີ່, ທີ່ພັກ ແລະ ອາຫານ.



Printed by BoltPDF (c) NCH Software. Free for non-commercial use only.

3.2.10 ກຳມະການ ການແພດ ແລະ ສຸຂະພາບ.

3.2.11 ກຳມະການ ກິດຈະກຳເຍົາວະຊົນ.

**ມາດຕາ 4: ສິດ, ໜ້າທີ່ ຂອງ ຄະນະຮັບຜິດຊອບຈັດງານມະຫາກຳກິລາແຫ່ງຊາດ.**

4.1 ຊີ້ນຳ, ນຳພາ ແລະ ຄຸ້ມຄອງບັນດາການຈັດຕັ້ງ ການຈັດງານມະຫາກຳກິລາແຫ່ງຊາດ.

4.2 ມີສິດອອກຄຳສັ່ງ ແລະ ພິຈາລະນາຕັດສິນ, ໃຫ້ການປຶກສາໃນບັນຫາຕ່າງໆແກ່ການຈັດຕັ້ງທີ່ກ່ຽວຂ້ອງກັບງານມະຫາກຳກິລາແຫ່ງຊາດ.

4.3 ຄຳສັ່ງ ແລະ ຄຳພິຈາລະນາ ຂອງ ຄະນະຮັບຜິດຊອບຈັດງານມະຫາກຳກິລາແຫ່ງຊາດ ໃນທຸກໆບັນຫາໃຫ້ຖືວ່າ: ເປັນຄຳຕັດສິນທີ່ມີຜົນສັກສິດຂັ້ນສຸດທ້າຍ.

4.4 ການເຮັດວຽກຂອງຄະນະຮັບຜິດຊອບຈັດງານມະຫາກຳກິລາແຫ່ງຊາດ ແມ່ນປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ເຮັດວຽກເປັນໝູ່ຄະນະ ແລະ ລະບອບຫົວໜ້າດຽວ.

4.5 ມີສິດຮຽກປະຊຸມລະດັບສາມັນ, ວິສາມັນ ແລະ ມີສິດຕົກລົງບັນຫາຕ່າງໆຜ່ານກອງປະຊຸມ.

4.6 ແຕ່ງຕັ້ງກອງເລຂາ, ກຳມະການ ແລະ ອະນຸກຳມະການຝ່າຍຕ່າງໆ ເພື່ອດຳເນີນການຈັດງານ ໃຫ້ປະສົບຜົນສຳເລັດໂດຍດີ.

4.7 ສັງລວມແຜນການ ແລະ ງົບປະມານ ເພື່ອຂໍອະນຸມັດຈາກ ລັດຖະບານ.

4.8 ມີໜ້າທີ່ລາຍງານຜົນຂອງການຈັດງານມະຫາກຳກິລາແຫ່ງຊາດ ຕໍ່ທ່ານປະທານປະເທດ ແລະ ນາຍົກລັດຖະມົນຕີ.

**ມາດຕາ 5: ສິດ, ໜ້າທີ່ ຂອງ ກອງເລຂາ.**

5.1 ເປັນເສນາທິການໃຫ້ຄະນະປະທານ, ຕິດຕາມກວດກາບັນດາກຳມະການຈັດງານມະຫາກຳກິລາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ.

5.2 ເປັນຜູ້ຄົ້ນຄວ້າ, ສະຫຼຸບຖອດຖອນບົດຮຽນ ແລະ ຮ່າງແຜນກຳນົດງານຕ່າງໆ ໃຫ້ແກ່ງານມະຫາກຳກິລາແຫ່ງຊາດ ເພື່ອສະເໜີໃຫ້ຄະນະປະທານ ຄະນະຮັບຜິດຊອບຈັດງານຕົກລົງ.

5.3 ກະກຽມເອກະສານຕ່າງໆກ່ຽວກັບງານມະຫາກຳກິລາແຫ່ງຊາດ ເປັນຕົ້ນແມ່ນຂໍ້ກຳນົດ ກົດລະບຽບການຈັດຕັ້ງການແຂ່ງຂັນກິລາແຫ່ງຊາດ, ຄຸ້ມຄອງ ແລະ ກວດກາການຂຶ້ນທະບຽນ ຜູ້ນຳ ແລະ ນັກກິລາຂອງບັນດາກະຊວງທີ່ກ່ຽວຂ້ອງ ແຂວງ ແລະ ນະຄອນຫຼວງ ທີ່ ຈະເຂົ້າຮ່ວມ.

5.4 ກະກຽມກອງປະຊຸມຕ່າງໆ ຂອງ ຄະນະປະທານ. ພ້ອມທັງຈັດຕັ້ງກອງປະຊຸມດັ່ງກ່າວ ແລະ ສະຫຼຸບຜົນຂອງຄວາມຄືບໜ້າໃນແຕ່ລະໜ້າວຽກໃຫ້ຄະນະປະທານຊີ້ນຳຮັບຊາບ.

5.5 ຮັບຜິດຊອບວຽກງານຖະແຫຼງຂ່າວ ແລະ ການປະຊາສຳພັນກັບພາຍນອກ.

5.6 ຮັບຜິດຊອບວຽກບໍລິຫານ, ປະສານງານທຸກຢ່າງກັບພາກສ່ວນອື່ນໆ.

5.7 ເປັນເຈົ້າການປະຊຸມ ຫົວໜ້າຄະນະນຳພາກິລາ ບັນດາກະຊວງ, ບັນດາແຂວງ ແລະ ນະຄອນຫຼວງເພື່ອລາຍງານແຈ້ງຂໍ້ມູນ ແລະ ລະບຽບການເຂົ້າຮ່ວມງານກິລາແຫ່ງຊາດ.



Printed by BoltPDF (c) NCH Software. Free for non-commercial use only.

**ມາດຕາ 6: ສິດ, ໜ້າທີ່ ຂອງ ກຳມະການຝ່າຍຕ່າງໆ.**

6.1 ຈັດຕັ້ງງານກິລາແຫ່ງຊາດໃຫ້ດຳເນີນໄປຕາມການຊີ້ນຳ ຂອງ ຄະນະຮັບຜິດຊອບຈັດງານມະຫາກຳກິລາແຫ່ງຊາດ.

6.2 ລາຍງານ ແລະ ຂໍທິດຊີ້ນຳ ຈາກຄະນະປະທານຄະນະຮັບຜິດຊອບ ໃນທຸກກໍລະນີທີ່ມີການຝ່າຝືນ ຂອງ ບຸກຄົນ ຫຼື ລວມໝູ່ ທີ່ບໍ່ປະຕິບັດຕາມການຕົກລົງ ແລະ ຂໍ້ກຳນົດສະບັບນີ້.

6.3 ຮັບຮອງເອົາລະບຽບການຕ່າງໆ ແລະ ວິທີການສອດຄ່ອງເໝາະສົມ ເພື່ອເຮັດໃຫ້ການຈັດງານມະຫາກຳກິລາແຫ່ງຊາດ ບັນລຸຈຸດປະສົງ, ເປົ້າໝາຍ ທີ່ວາງໄວ້ໃນຂໍ້ກຳນົດສະບັບນີ້.

6.4 ຊີ້ນຳບັນດາອະນຸກຳມະການຕ່າງໆທີ່ຂຶ້ນກັບຕົນ ເພື່ອໃຫ້ຮັບຜິດຊອບວຽກງານຂອງງານມະຫາກຳກິລາແຫ່ງຊາດຕາມສິດໜ້າທີ່ຂອງຕົນ.

6.5 ສົມທົບກັບກອງເລຂາ ກະກຽມເອກະສານຕ່າງໆທີ່ພົວພັນເຖິງການແຂ່ງຂັນກິລາແຫ່ງຊາດ ເປັນຕົ້ນແມ່ນແຜນການ-ງົບປະມານ, ກົດລະບຽບ, ກະຕິກາ, ນະໂຍບາຍ ສຳລັບງານແຂ່ງຂັນກິລາແຫ່ງຊາດ.

6.6 ເຜີຍແຜ່ກົດລະບຽບ ແລະ ເອກະສານຕ່າງໆ ທີ່ພົວພັນເຖິງງານມະຫາກຳກິລາແຫ່ງຊາດ ໃຫ້ຜູ້ນຳກິລາທີ່ ເຂົ້າຮ່ວມແຂ່ງຂັນຮັບຮູ້ ເພື່ອພ້ອມກັນຈັດຕັ້ງປະຕິບັດ.

6.7 ຈັດຕັ້ງການຝຶກອົບຮົມບຸກຄະລາກອນ, ກຳມະການຕັດສິນ, ພະນັກງານຮັບໃຊ້, ເພື່ອຮັບປະກັນຄວາມສະດວກໃນການດຳເນີນການຕັດສິນກິລາ, ຄຸ້ມຄອງການໄປມາ, ຄວາມສະຫງົບປອດໄພ, ຮັບປະກັນດ້ານອຸປະໂພກ-ບໍລິໂພກ, ລາຄາສິນຄ້າ, ລາຄາຂົນສົ່ງຈໍລະຈອນ, ການຈັດສັນຕະຫຼາດນັດ, ລາຍການທ່ອງທ່ຽວ ແລະ ການພົວພັນຕ່າງປະເທດຂອງງານ.

6.8 ມີສິດຮຽກປະຊຸມຕາມຂັ້ນຕົນ ແລະ ອະນຸກຳມະການທີ່ກ່ຽວຂ້ອງ ໃນເມື່ອໄດ້ຮັບການຊີ້ນຳຈາກຂັ້ນເທິງ( ຄະນະປະທານຈັດງານ) ແລະ ມີສິດຮຽກປະຊຸມວິສາມັນຖ້າຈຳເປັນ.

6.9 ຈັດຕັ້ງການປະເມີນຜົນ ແລະ ສະຫຼຸບລາຍງານປະເມີນຜົນຂອງທຸກວຽກງານໃນການຈັດງານມະຫາກຳກິລາແຫ່ງຊາດ.

6.10 ມີສິດໃນການຄຸ້ມຄອງ ແລະ ຈັດການແຂ່ງຂັນປະເພດກິລາໃນງານກິລາແຫ່ງຊາດ.

**ມາດຕາ 7: ສິດ, ໜ້າທີ່ ຂອງ ອະນຸກຳມະການຝ່າຍຕ່າງໆ**

7.1 ມີໜ້າທີ່ວາງແຜນການວຽກລະອຽດຂອງຕົນ ເພື່ອສະເໜີຕໍ່ກຳມະການທີ່ຕົນຂຶ້ນກັບຜ່ານໄປຍັງກຳມະການຈັດງານມະຫາກຳກິລາແຫ່ງຊາດ.

7.2 ຂຶ້ນແຜນງົບປະມານຮັບໃຊ້ສຳລັບວຽກງານອະນຸກຳມະການຂອງຕົນ ເພື່ອຂໍສະເໜີອະນຸມັດ ແຕ່ຕ້ອງຕິດແທດກັບການຫາລາຍໄດ້, ການອຸປະຖຳອື່ນໆໃນການສ້າງລາຍຮັບຂອງຕົນ. ພ້ອມນັ້ນກໍ່ຮັບຜິດຊອບດ້ານ ລາຍຮັບ- ລາຍຈ່າຍ ແລະ ສະຫຼຸບວຽກງານໃຫ້ກຳມະການຂອງຕົນ ເພື່ອສັງລວມສົ່ງໃຫ້ກຳມະການຈັດງານມະຫາກຳກິລາແຫ່ງຊາດຕາມລະບຽບການ.



Printed by BoltPDF (c) NCH Software. Free for non-commercial use only.

7.3 ມີໜ້າທີ່ລົງເລິກຄຸ້ມຄອງ ແລະ ນໍາພາການປະຕິບັດວຽກງານຕົວຈິງໄລຍະກະກຽມ ແລະ ໄລຍະແຂ່ງຂັນ ຂອງ ອະນຸກໍາມະການຕົນຢ່າງໃກ້ຊິດ ແລະ ທັນເວລາ.

7.4 ມີສິດພົວພັນ, ລາຍງານ ແລະ ຂໍຄໍາເຫັນທິດທາງໂດຍກົງຈາກກໍາມະການ ແລະ ຄະນະຮັບຜິດຊອບຈັດງານມະຫາກໍາກິລາແຫ່ງຊາດ ແລະ ກອງເລຂາ

7.5 ມີສິດ ແລະ ໜ້າທີ່ ປະສານງານພົວພັນກັບທຸກໆອະນຸກໍາມະການໃນກໍາມະການຂອງຕົນ ເພື່ອປຶກສາຫາລື ແລະ ແລກປ່ຽນບົດຮຽນດ້ານຕ່າງໆ ໃນການປະຕິບັດວຽກງານຂອງຕົນ.

7.6 ມີສິດ ແລະ ໜ້າທີ່ ສ້າງລະບຽບການເຄື່ອນໄຫວວຽກງານ, ຂໍ້ກໍານົດຕ່າງໆຂອງຕົນ ເພື່ອສະເໜີຕໍ່ກໍາມະການ ແລະ ຄະນະຮັບຜິດຊອບຈັດງານມະຫາກໍາກິລາແຫ່ງຊາດຮັບຮອງເອົາ

7.7 ມີໜ້າທີ່ຈັດຫາອຸປະກອນ ເຄື່ອງຮັບໃຊ້ ສິ່ງຈໍາເປັນທຸກຢ່າງ ໃນການນໍາໃຊ້ເຂົ້າໃນວຽກງານຂອງຕົນໃຫ້ໄດ້ຮັບຜົນດີ.

7.8 ມີໜ້າທີ່ຈັດຫາ ແລະ ປະກອບບຸກຄະລາກອນ ເຂົ້າຮັບໃຊ້ວຽກງານຕາມພາລະບົດບາດ.

## ພາກທີ III
## ວ່າດ້ວຍລະບຽບການແຂ່ງຂັນ

**ມາດຕາ 8:** ສໍາລັບການແຂ່ງຂັນກິລາແຫ່ງຊາດ ອະນຸຍາດໃຫ້ນັກກິລາຜູ້ໜຶ່ງເຂົ້າແຂ່ງຂັນໄດ້ 01 ປະເພດກິລາ, ແຕ່ສາມາດແຂ່ງຂັນໄດ້ຫຼາຍລາຍການຂອງປະເພດກິລາທີ່ຕົນສະໝັກເຂົ້າຮ່ວມແຂ່ງຂັນຕາມລະບຽບການ ຂອງປະເພດກິລາ ທີ່ ສະຫະພັນກິລາແຫ່ງຊາດວາງອອກ.

- ສໍາລັບປະເພດກິລາທີ່ບັນຈຸເຂົ້າໃນການແຂ່ງຂັນ ຖ້າບໍ່ມີເຖິງ 04 ຄະນະ (04 ພາກສ່ວນ) ຈະບໍ່ໄດ້ຈັດການແຂ່ງຂັນ.
- ແຕ່ລະລາຍການແຂ່ງຂັນ ຂອງ ກິລາປະເພດໃດໜຶ່ງ ຖ້າຫາກບໍ່ມີນັກກິລາເຂົ້າຮ່ວມແຂ່ງຂັນໃນລາຍການນັ້ນເຖິງ 03 ຄົນ ຈະບໍ່ໄດ້ຈັດການແຂ່ງຂັນ.

**ມາດຕາ 9:** ການແຂ່ງຂັນກິລາແຕ່ລະປະເພດໃຫ້ປະຕິບັດຕາມລະບຽບ ທີ່ ກົມກິລາລະດັບສູງ ຮ່ວມກັບສະຫະພັນກິລາແຫ່ງຊາດວາງອອກ ໂດຍຜ່ານການເຫັນດີ ຂອງ ກະຊວງສຶກສາທິການ ແລະ ກິລາ

**ມາດຕາ 10:** ຈໍານວນນັກກິລາແຕ່ລະປະເພດ ທີ່ຈະເຂົ້າຮ່ວມແຂ່ງຂັນກິລາແຫ່ງຊາດ ແມ່ນປະຕິບັດຕາມລະບຽບ ແລະ ກະຕິກາ ຂອງ ແຕ່ລະປະເພດກິລາ ຕາມມາດຕາ 9.

## ພາກທີ່ IV
## ວ່າດ້ວຍມາດຕະຖານ ແລະ ເງື່ອນໄຂ ນັກກິລາເຂົ້າຮ່ວມການແຂ່ງຂັນ

**ມາດຕາ 11:** ນັກກິລາທີ່ສະໝັກເຂົ້າຮ່ວມການແຂ່ງຂັນກິລາແຫ່ງຊາດ ຕ້ອງມີມາດຕະຖານ ແລະ ເງື່ອນໄຂ, ດັ່ງນີ້:

11.1 ເປັນຄົນສັນຊາດລາວ, ຊາວຕ່າງດ້າວ ທີ່ຕັ້ງພູມລໍາເນົາຢູ່ ສ ປ ປ ລາວ ຢ່າງຖາວອນ ໂດຍມີບັດປະຈໍາຕົວ ແລະ ສໍາມະໂນຄົວເປັນຫຼັກຖານ.



Printed by BoltPDF (c) NCH Software. Free for non-commercial use only.

11.2 ເປັນນັກກິລາທີ່ບໍ່ຖືກລົງໂທດ ຫຼື ໃຫ້ພັກການແຂ່ງຂັນຈາກສະຫະພັນກິລາຕ່າງໆ ຫຼື ຈາກ ຄະນະກໍາມະການຈັດງານກິລາແຫ່ງຊາດໃນຄັ້ງກ່ອນ, ແຕ່ຖ້າຫາກຜູ້ກ່ຽວໝົດກໍານົດໂທດແລ້ວ ກໍ່ມີເງື່ອນໄຂເຂົ້າຮ່ວມແຂ່ງຂັນໄດ້.

11.3 ນັກກິລາຂອງບັນດາກະຊວງ, ບັນດາແຂວງ ແລະ ນະຄອນຫຼວງ ທີ່ຈະເຂົ້າຮ່ວມການແຂ່ງຂັນກິລາແຫ່ງຊາດໃຫ້ປະຕິບັດດັ່ງນີ້:

- ຕ້ອງເປັນນັກກິລາທີ່ໄດ້ລົງທະບຽນຢ່າງຖືກຕ້ອງກັບພາກສ່ວນທີ່ຕົນສັງກັດ ແລ້ວສົ່ງໃຫ້ກະຊວງສຶກສາທິການ ແລະ ກິລາ (ກົມກິລາລະດັບສູງ) ແລະ ຄະນະຮັບຜິດຊອບຈັດງານມະຫາກໍາກິລາແຫ່ງຊາດ ພາກສ່ວນລະ 01 ສະບັບຢ່າງໜ້ອຍ, ໂດຍບໍ່ໃຫ້ຫຼຸດ 06 ເດືອນ ກ່ອນການແຂ່ງຂັນ ຄື: ສົ່ງກ່ອນວັນທີ......... (ຕາມແບບຟອມການຂຶ້ນທະບຽນ) ແລະ ຄັດຕິດສໍາເນົາ ບັດປະຈໍາຕົວ ແລະ ສໍາມະໂນຄົວ ເພື່ອເປັນຫຼັກຖານ
- ສໍາລັບນັກກິລາທີ່ຂຶ້ນທະບຽນກັບພາກສ່ວນໃດໜຶ່ງແລ້ວ ບໍ່ມີສິດໄປຂຶ້ນທະບຽນກັບພາກສ່ວນອື່ນອີກ, ນັກກິລາທີ່ເຫຼືອຈາກການຄັດເລືອກບໍ່ໄດ້ຂຶ້ນທະບຽນຢູ່ນໍາ ບັນດາກະຊວງ, ບັນດາແຂວງ ແລະ ນະຄອນຫຼວງ ມີສິດໄປຫຼິ້ນໃຫ້ພາກສ່ວນອື່ນໄດ້ ໂດຍຕ້ອງມີໜັງສືອະນຸຍາດຈາກການຈັດຕັ້ງທີ່ຕົນສັງກັດ ແລະ ໜັງສືສະເໜີຂອງການຈັດຕັ້ງທີ່ຕົນຈະໄປເຄື່ອນໄຫວໃຫ້ໃນໄລຍະແຂ່ງຂັນງານມະຫາກໍາກິລາແຫ່ງຊາດ.

11.4 ກໍລະນີນັກກິລາທີ່ຮຽນຈົບ ຫຼື ເປັນພະນັກງານທີ່ຍົກຍ້າຍສັບຊ້ອນບ່ອນປະຈໍາການໃໝ່ ມີສິດຂຶ້ນທະບຽນນໍາກົມກອງໃໝ່ທີ່ຕົນສັງກັດຢູ່ຢ່າງໜ້ອຍບໍ່ຫຼຸດ 60 ວັນ ແລະ ຕ້ອງມີໜັງສືຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ(ທະບຽນທີ່ຂຶ້ນກັບພາກສ່ວນເກົ່າຈະຖືກລຶບລ້າງໂດຍອັດຕະໂນມັດ).

11.5 ນັກກິລາທີມຊາດລາວທີ່ໄດ້ເຂົ້າຮ່ວມການແຂ່ງຂັນກິລາ ຊີເກມ, ເອຊຽນເກມ, ໂອແລມປິກ ແລະ ການແຂ່ງຂັນຊິງຊະນະເລີດລະດັບ ອາຊ່ຽນ, ອາຊີ ແລະ ລະດັບໂລກ ຄັ້ງຫລ້າສຸດ ອະນຸຍາດໃຫ້ເຂົ້າຮ່ວມການແຂ່ງຂັນກິລາແຫ່ງຊາດໄດ້ ສະເພາະບາງປະເພດກິລາ ແລະ ກໍານົດຈໍານວນນັກກິລາຕາມລະບຽບການແຂ່ງຂັນຂອງ ສະຫະພັນກິລາແຫ່ງຊາດ ແຕ່ລະປະເພດໂດຍການເຫັນດີຂອງ ກະຊວງສຶກສາທິການ ແລະ ກິລາ.

## ພາກທີ V
## ການສະໝັກເຂົ້າແຂ່ງຂັນກິລາແຫ່ງຊາດ

**ມາດຕາ 12: ປະເພດກິລາຂອງ ບັນດາກະຊວງ, ບັນດາແຂວງ ແລະ ນະຄອນຫຼວງ.**

ບັນດາກະຊວງ, ບັນດາແຂວງ ແລະ ນະຄອນຫຼວງ ທີ່ຕ້ອງການເຂົ້າຮ່ວມແຂ່ງຂັນກິລາແຫ່ງຊາດ ຕ້ອງມີກິລາຢ່າງໜ້ອຍ 04 ປະເພດ ລວມທັງກິລາແລ່ນ-ລານ ແລະ ໃຫ້ປະຕິບັດຕາມລະບຽບທີ່ໄດ້ລະບຸໄວ້ໃນ ມາດຕາ 8 ແລະ ໃຫ້ແຈ້ງປະເພດກິລາຂອງຕົນທີ່ຈະເຂົ້າຮ່ວມແຂ່ງຂັນໃຫ້ກອງເລຂາ ຈໍານວນ 03 ສະບັບ ກ່ອນມື້ເປີດງານກິລາແຫ່ງຊາດ 90 ວັນ.

**ມາດຕາ 13:** ຈໍານວນນັກກິລາ ຂອງ ບັນດາກະຊວງ ບັນດາແຂວງ ແລະ ນະຄອນຫຼວງ. ກະລຸນາແຈ້ງບັນຊີລາຍຊື່ຜູ້ນໍາ ແລະ ນັກກິລາ ຈໍານວນ 03 ຊຸດ ໃຫ້ກອງເລຂາພາຍໃນກໍານົດ ເວລາ 45 ວັນ ກ່ອນການເປີດ



Printed by BoltPDF (c) NCH Software. Free for non-commercial use only.

ງານກິລາແຫ່ງຊາດ ລາຍຊື່ ແລະ ສຳເນົາເອກະສານດັ່ງກ່າວ ແມ່ນຫ້າມບໍ່ໃຫ້ມີການປ່ຽນແປງ ຫຼື ສັບປ່ຽນຕົວນັກກິລາ ຫຼື ເພີ່ມເຕີມ, ເວັ້ນເສຍແຕ່ກໍລະນີພິເສດທີ່ເກີດຂຶ້ນພົວພັນກັບຕົວນັກກິລາ ແລະ ຄອບຄົວເທົ່ານັ້ນ, ແຕ່ກໍ່ຕ້ອງ ໄດ້ຮັບການອະນຸຍາດ ຈາກຄະນະຮັບຜິດຊອບຈັດງານມະຫາກຳກິລາແຫ່ງຊາດເສຍກ່ອນ.

## ພາກທີ VI
## ວ່າດ້ວຍລາງວັນ ແລະ ໃບຢັ້ງຢືນ

**ມາດຕາ** 14: ລາງວັນຂອງການແຂ່ງຂັນກິລາປະເພດຕ່າງໆ ໃນງານມະຫາກຳກິລາແຫ່ງຊາດ ປະກອບດ້ວຍ:

14.1 ລາງວັນທີ I: ຫຼຽນຄຳ ແລະ ໃບຢັ້ງຢືນ

14.2 ລາງວັນທີ II: ຫຼຽນເງິນ ແລະ ໃບຢັ້ງຢືນ

14.3 ລາງວັນທີ III: ຫຼຽນທອງ ແລະ ໃບຢັ້ງຢືນ

**ມາດຕາ** 15: ໃນກໍລະນີການແຂ່ງຂັນກິລາບາງປະເພດ ທີ່ນັກກິລາມີສິດແຂ່ງຂັນໄດ້ຫຼາຍລາຍການ, ປະເພດບຸກຄົນ (ດ່ຽວ) ເຊັ່ນ: ແລ່ນ-ລານ, ຍິງປືນ, ລົດຖີບ.... ສາມາດເຂົ້າແຂ່ງຂັນປະເພດໝູ່ຄະນະຂອງກິລາປະເພດນັ້ນໄດ້ ຖ້ານັກກິລາຄົນໃດຄົນໜຶ່ງໃນທີມຫາກຊະນະ ທີ I, II, III ບໍ່ວ່າຈະລຽງລຳດັບ ຫຼື ບໍ່ກໍ່ຕາມ ນັກກິລາຄົນນັ້ນມີສິດໄດ້ຮັບລາງວັນຕາມທີ່ກຳນົດໄວ້ໃນກິລາປະເພດບຸກຄົນ.

## ພາກທີ VII
## ການປະທ້ວງ

**ມາດຕາ** 16: **ກ່ຽວກັບຄະນະຮັບຜິດຊອບພິຈາລະນາການປະທ້ວງ**

16.1 ຄະນະຮັບຜິດຊອບພິຈາລະນາການປະທ້ວງ ດ້ານມາດຕະຖານ ແລະ ເງື່ອນໄຂ ຂອງ ນັກກິລາ ຜູ້ນຳທີມ ແລະ ຄະນະນຳນັກກິລາອື່ນໆ ປະກອບດ້ວຍ

- ຜູ້ຕາງໜ້າຊຶ່ງເປັນຕົວແທນຈາກ ກະຊວງສຶກສາທິການ ແລະ ກິລາ 01 ທ່ານ ເປັນປະທານ.
- ຜູ້ຕາງໜ້າທີ່ເປັນຕົວແທນຂອງສະຫະພັນກິລາທີ່ກ່ຽວຂ້ອງ 01 ທ່ານ ເປັນຮອງ.
- ຕົວແທນ ຂອງ ບັນດາກະຊວງ ບັນດາແຂວງ ແລະ ນະຄອນຫຼວງ ພາກສ່ວນລະ 01 ທ່ານ ເປັນກຳມະການ.

16.2 ຄະນະຮັບຜິດຊອບພິຈາລະນາການປະທ້ວງ ດ້ານເຕັກນິກ, ປະກອບດ້ວຍ:

- ຄະນະຮັບຜິດຊອບຈັດການແຂ່ງຂັນກິລາປະເພດທີ່ມີການປະທ້ວງ ຊຶ່ງເປັນຕົວແທນຈາກສະຫະພັນ ທີ່ກ່ຽວ ຂ້ອງ ເປັນປະທານ.
- ຫົວໜ້າກິລາພາກສ່ວນຕ່າງໆ ປະເພດທີ່ມີການປະທ້ວງ ພາກສ່ວນລະ 01 ທ່ານ ເພື່ອປະກອບເປັນກຳມະການ.



Printed by BoltPDF (c) NCH Software. Free for non-commercial use only.

**ມາດຕາ 17: ຫຼັກການ ແລະ ເງື່ອນໄຂຂອງການປະທ້ວງ**

17.1 ການປະທ້ວງດ້ານມາດຕະຖານ ແລະ ເງື່ອນໄຂເຂົ້າຮ່ວມການແຂ່ງຂັນ ແມ່ນໃຫ້ຜູ້ນຳທີມນັກກິລາ ຂອງ ບັນດາກະຊວງ, ບັນດາແຂວງ ແລະ ນະຄອນຫຼວງ ເປັນຜູ້ປະທ້ວງ ແລະ ຍື່ນຄຳປະທ້ວງເປັນລາຍລັກອັກສອນພ້ອມດ້ວຍຫຼັກຖານຄົບຊຸດ ແລະ ເງິນຄ້ຳປະກັນ 500.000 ກີບ ຕໍ່ປະທານຄະນະຮັບຜິດຊອບພິຈາລະນາການປະທ້ວງພາຍໃນ 24 ຊົ່ວໂມງ ກ່ອນການແຂ່ງຂັນກິລາປະເພດນັ້ນຕໍ່ໄປ.

17.2 ການປະທ້ວງດ້ານເຕັກນິກ ໃຫ້ປະຕິບັດຕາມລະບຽບ ແລະ ກະຕິກາ ການແຂ່ງຂັນຂອງກິລາປະເພດນັ້ນໄດ້ກຳນົດໄວ້, ຊຶ່ງແມ່ນຜູ້ນຳທີມຂອງບັນດາກະຊວງ, ບັນດາແຂວງ ແລະ ນະຄອນຫຼວງ ເປັນຜູ້ຍື່ນຄຳປະທ້ວງຕາມມາດຕາ 17 ຂໍ້ 17.1 ພາຍໃນເວລາ 24 ຊົ່ວໂມງ ຫຼັງຈາກເສັດຊື້ນການແຂ່ງຂັນ.

ມາດຕາ 18: ປະທານຄະນະຮັບຜິດຊອບພິຈາລະນາການປະທ້ວງ ໄດ້ຮັບຄຳປະທ້ວງແລ້ວ ຈຶ່ງຮຽກປະຊຸມປຶກສາຫາລື:

- ໃນກໍລະນີທີ່ເຫັນວ່າການພິຈາລະນາຄຳປະທ້ວງດັ່ງກ່າວເປັນຄວາມຈິງ ຫຼື ບໍ່, ປະທານຄະນະຮັບຜິດຊອບພິຈາລະນາການປະທ້ວງ ແລະ ຕັດສິນໄປຕາມລະບຽບຫຼັກການທີ່ໄດ້ກຳນົດໄວ້ ຕາມກໍລະນີໜັກ ຫຼື ເບົາ.
- ໃນກໍລະນີການປະທ້ວງແມ່ນຄວາມຈິງ ຄະນະຮັບຜິດຊອບພິຈາລະນາການປະທ້ວງ ຈະໄດ້ສົ່ງເງິນຄ້ຳປະກັນຄືນ, ຖ້າບໍ່ແມ່ນຄວາມຈິງ ຈະໄດ້ຍຶດເງິນດັ່ງກ່າວແລ້ວສົ່ງໃຫ້ຄະນະກຳມະການການເງິນແລະສິດທິປະໂຫຍດ.

## **ພາກທີ VIII**
## **ການລົງໂທດ**

ມາດຕາ 19: ຄະນະຮັບຜິດຊອບ ຫຼື ນັກກິລາຫາກລະເມີດຕໍ່ລະບຽບ ແລະ ກົດກະຕິກາການແຂ່ງຂັນ ຫຼື ບໍ່ປະຕິບັດຕາມການຕັດສິນຂອງປະທານຄະນະຮັບຜິດຊອບພິຈາລະນາການປະທ້ວງ ຕາມພາກທີ VII, ໃຫ້ຖືວ່າການກະທຳ ຂອງ ຄະນະຮັບຜິດຊອບ ຫຼື ນັກກິລາຜູ້ນັ້ນ ເປັນການກະທຳທີ່ຂັດຕໍ່ຈຸດປະສົງຂອງການສົ່ງເສີມການກິລາຕາມຂໍ້ກຳນົດສະບັບນີ້. ສະເໜີຕໍ່ປະທານຄະນະຮັບຜິດຊອບຈັດງານມະຫາກຳກິລາແຫ່ງຊາດ ພິຈາລະນາຕັດສິນໃຫ້ຄະນະຮັບຜິດຊອບ ຫຼື ນັກກິລາທີ່ລະເມີດນັ້ນ ອອກຈາກການເຂົ້າຮ່ວມການແຂ່ງຂັນ.

**ມາດຕາ 20: ຄະນະຮັບຜິດຊອບ ຫຼື ນັກກິລາ ຫາກປະພຶດຕົນບໍ່ເໝາະສົມຕໍ່ໜ້າທີ່ວຽກງານ ແລະ ຂາດມາລະຍາດ ເຊັ່ນ:**

- ເຂົ້າຮ່ວມການແຂ່ງຂັນບໍ່ທັນຕາມກຳນົດເວລາ, ເປັນຜູ້ກໍ່ເຫດວິວາດທຳຮ້າຍຮ່າງກາຍ.
- ທຳລາຍສະໜາມ ແລະ ອຸປະກອນກິລາ, ໃຊ້ຄຳເວົ້າຫຍາບຄາຍບໍ່ສຸພາບຕໍ່ຄູ່ແຂ່ງຂັນ, ຕໍ່ກຳມະການຕັດສິນ, ຕໍ່ຄະນະຮັບຜິດຊອບໃນເວລາແຂ່ງຂັນ ແມ່ນຈະຖືກລົງໂທດໜັກ ຫຼື ເບົາ ຕາມກໍລະນີ ຫຼື ໃຫ້ອອກຈາກການແຂ່ງຂັນ



Printed by BoltPDF (c) NCH Software. Free for non-commercial use only.

ມາດຕາ 21 : ທຸກໆການລະເມີດຈະຖືກລົງໂທດ, ດັ່ງນີ້:

21.1 ການແຂ່ງຂັນແບບພົບກັນໝົດ: ສຳລັບຜົນການແຂ່ງຂັນຝ່າຍທີ່ໄດ້ກະທຳການລະເມີດໃຫ້ຖືວ່າລົບລ້າງ ສ່ວນຜົນຂອງຄູ່ແຂ່ງຂັນໃຫ້ຖືວ່າເປັນຝ່າຍຊະນະ, ແຕ່ຕ້ອງຮັກສາຜົນຂອງການແຂ່ງຂັນຂອງຝ່າຍລະເມີດທີ່ໄດ້ແຂ່ງຂັນມາກ່ອນແລ້ວນັ້ນໄວ້.

21.2 ການແຂ່ງຂັນແບບເສຍຄັດອອກ: ສຳລັບຜົນການແຂ່ງຂັນໃນນັດທີ່ມີການລະເມີດ ໃຫ້ຖືວ່າເປັນຝ່າຍເສຍໄປເລີຍ.

21.3 ໃນກໍລະນີປະເພດບຸກຄົນ, ປະເພດກິລາໝູ່ຄະນະໃດ ທີ່ໄດ້ມີການລະເມີດຕໍ່ລະບຽບ, ກວດພົບສານກະຕຸ້ນຕ່າງໆຊຶ່ງເປັນສິ່ງຕ້ອງຫ້າມ, ຫາກໄດ້ຮັບລາງວັນ ຫຼື ໄດ້ຮັບຕຳແໜ່ງໃນການແຂ່ງຂັນ ຈະໄດ້ຖືກລົບລ້າງສະຫຼະສິດ ໂດຍສົ່ງລາງວັນຄືນໃຫ້ຄະນະກຳມະການຈັດງານແຂ່ງຂັນກິລາແຫ່ງຊາດຮັກສາໄວ້ ເພື່ອຈະໄດ້ມອບໃຫ້ຜູ້ໄດ້ອັນດັບຖັດໄປ.

## ພາກທີ IX
## ລະບຽບການສຸດທ້າຍ

ມາດຕາ 22 : ການຈັດຕັ້ງປະຕິບັດ.

ມອບໃຫ້ຄະນະຮັບຜິດຊອບຈັດງານມະຫາກຳກິລາແຫ່ງຊາດ, ກະຊວງ ສຶກສາທິການ ແລະ ກິລາ, ບັນດາກະຊວງ, ບັນດາແຂວງ, ນະຄອນຫຼວງ ແລະ ບັນດາສະຫະພັນ, ກຳມະການ, ອະນຸກຳມະການຕ່າງໆ ເປັນຜູ້ຈັດຕັ້ງປະຕິບັດຕາມຂໍ້ກຳນົດສະບັບນີ້.

ມາດຕາ 23 : ຂໍ້ກຳນົດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ(ຂໍ້ກຳນົດວ່າດ້ວຍການຈັດຕັ້ງງານມະຫາກຳກິລາແຫ່ງຊາດທຸກຄັ້ງທີ່ຜ່ານມາລ້ວນແຕ່ຖືກລົບລ້າງ).

ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ

ດຣ.ພັນຄຳ ວິພາວັນ



Printed by BoltPDF (c) NCH Software. Free for non-commercial use only.